# ຂອບການເປັນຄູ່ຮ່ວມມືກັບປະເທດ ສໍາລັບ ສປປ ລາວ 2017-2021

WORLD BANK GROUP

LAO

June 2017

# ສາລະບານ

1. ການມີສ່ວນຮ່ວມກັບປະເທດ ຂອງກຸ່ມທະນາຄານໂລກ
2. ແຜນງານຂອງລັດຖະບານ
3. ຂອບການເປັນຄູ່ຮ່ວມມືກັບປະເທດ (CPF) 2017-2021
4. ໂຄງການໃໝ່ ສໍາລັບ 2017-2018
5. ໂຄງການໃໝ່ ຢູ່ພາກເໜືອຂອງ ສປປ ລາວ

*ຮູບພາບທັງໝົດແມ່ນລິຂະສິດຂອງກຸ່ມທະນາຄານໂລກ ປະຈໍາສປປ ລາວ.*



# 1. ການມີສ່ວນຮ່ວມກັບປະເທດ ຂອງກຸ່ມທະນາຄານໂລກ (WBG)

# ການມີສ່ວນຮ່ວມກັບປະເທດ ຂອງກຸ່ມທະນາຄານໂລກ (WBG)








# 2. ແຜນງານຂອງລັດຖະບານ

# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020)

## ຈຸດໝາຍລວມ

"ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມຢ່າງໜັກແໜ່ນ; ສືບຕໍ່ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ຢ່າງໜັກແໜ້ນ ແລະ ທົ່ວເຖິງ; ພັດທະນາປະເທດໃຫ້ບັນລຸເງື່ອນໄຂຂອງການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020 ໂດຍຊຸກຍູ້ການເຕີບໂຕທີ່ຕໍ່ເນື່ອງ, ສົມດູນ ແລະ ຍືນຍົງ ແລະ ການພັດທະນາການເຕີບໂຕສີຂຽວ; ມີການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດຢ່າງມີປະສິດທິຜົນສູງ; ສ້າງໃຫ້ໄດ້ຮູບແບບການພັດທະນາ ຕາມທິດເສີມຂະຫຍາຍທ່າແຮງບົ່ມຊ້ອນ ແລະ ຂໍ້ໄດ້ປຽບຂອງປະເທດ; ເຂົ້າຮ່ວມໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງເປັນເຈົ້າການ."

LAO

WORLD BANK GROUP

# ໂຄງສ້າງຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII

## ໝາກຜົນ (Outcomes)

| ການເຕີບໂຕທີ່ຕໍ່ເນື່ອງ-ໝັ້ນທ່ຽງ ແລະ ສົມດູນ | ການພັດທະນາຊັບພະຍາກອນມະນຸດ | ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
|---|---|---|
|  |  |  |

## ຜົນຮັບ (Outputs)

**ການເຕີບໂຕທີ່ຕໍ່ເນື່ອງ-ໝັ້ນທ່ຽງ ແລະ ສົມດູນ**

- ເສດຖະກິດມີການເຕີບໂຕທີ່ຕໍ່ເນື່ອງ-ໝັ້ນທ່ຽງ ແລະ ສົມດູນ
- ເສດຖະກິດມະຫາພາກມີສະຖຽນລະພາບ
- ການວາງແຜນພັດທະນາ ແລະ ແຜນງົບປະມານ ມີການປະສົມປະສານກັນ
- ການພັດທະນາໃນລະດັບພາກ ແລະ ທ້ອງຖິ່ນ ມີຄວາມສົມສ່ວນ
- ຂີດຄວາມສາມາດຂອງກຳລັງແຮງງານຂອງພາກລັດ/ພາກເອກະຊົນ ໄດ້ຮັບການຍົກລະດັບສູງຂຶ້ນ
- ບັນດາຜູ້ປະກອບການພາຍໃນ ມີຄວາມສາມາດໃນການແຂ່ງຂັນ
- ການເຊື່ອມໂຍງກັບພາກພື້ນ/ສາກົນ

**ການພັດທະນາຊັບພະຍາກອນມະນຸດ**

- ມາດຕະຖານຊີວິດການເປັນຢູ່ ໄດ້ຮັບການປັບປຸງດີຂຶ້ນ/ຄວາມທຸກຍາກຫລຸດລົງ
- ຄວາມໝັ້ນຄົງດ້ານອາຫານ ແລະ ໂພຊະນາການໄດ້ຮັບການປັບປຸງດີຂຶ້ນ
- ການເຂົ້າການສຶກສາທີ່ມີຄຸນນະພາບສູງ
- ການເຂົ້າເຖິງການປິ່ນປົວ-ຮັກສາສຸຂະພາບທີ່ມີຄຸນນະພາບສູງ
- ວຽກງານສະຫວັດດີການສັງຄົມມີຄວາມເຂັ້ມແຂງ
- ການປົກປັກຮັກສາວັດທະນະທຳ ແລະ ຮີດຄອງປະເພນີ
- ສະຖຽນລະພາບທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມຍຸຕິທຳ & ຄວາມໂປ່ງໃສ

**ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

- ການປົກປັກຮັກສາສິ່ງແວດລ້ອມ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດຢ່າງຍືນຍົງ
- ການກະກຽມເພື່ອຮັບມືກັບໄພພິບັດຈາກທຳມະຊາດ ແລະ ການຫລຸດຜ່ອນຄວາມສ່ຽງ
- ການຫລຸດຜ່ອນຄວາມບໍ່ໝັ້ນຄົງ ຂອງການຜະລິດກະສິກຳ

**ເປົ້າໝາຍລວມ: ການຫລຸດຜ່ອນຄວາມທຸກຍາກ ແລະ ການຫລຸດພົ້ນອອກຈາກສະຖານະພາບຂອງປະເທດດ້ອຍພັດທະນາ**

WORLD BANK GROUP




# 3. ຂອບການເປັນຄູ່ຮ່ວມມືກັບປະເທດ (CPF) 2017-2021

LAO

WORLD BANK GROUP

# ເປົ້າໝາຍ ແລະ ຮູບແບບວິທີ ຂອງ CPF

*ການເຂົ້າເຖິງການເລະໂອກາດຢ່າງຖາວອນ ສໍາລັບທຸກຄົນ*

*Lasting Accessible Opportunities for ALL*

- ການກໍານົດທິດທາງໂດຍການປະສານງານຂອງທຸກພາກສ່ວນ ແລະ ຢ່າງຮອບຄອບໄປສູ່ **ການເຕີບໂຕສີຂຽວ ແລະ ຄວາມຍືນຍົງ** ໃນການປະຕິບັດເພື່ອບັນລຸສອງເປົ້າໝາຍຂອງ ກຸ່ມທະນາຄານໂລກ (ຄື: *ຢຸດຕິຄວາມທຸກຍາກທີ່ຮ້າຍແຮງ ແລະ ສົ່ງເສີມການແບ່ງປັນຄວາມອຸດົມຮັ່ງມີຢ່າງທົ່ວເຖິງ ສໍາລັບກຸ່ມພົນລະເມືອງ 40% ທີ່ມີລາຍໄດ້ ຕໍ່າທີ່ສຸດ*).

- ການສະໜັບສະໜູນແກ່ **ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020)** ທີ່ດໍາເນີນຢູ່ໃນປັດຈຸບັນ ຂອງລັດຖະບານ ທີ່ມີຄວາມສອດຄ່ອງຢ່າງສະໜິດແໜ້ນກັບ **ເປົ້າໝາຍການພັດທະນາແບບຍືນຍົງ (SDGs)**.

LAO

WORLD BANK GROUP

# ການຊ່ວຍເຫຼືອຂອງກຸ່ມທະນາຄານໂລກ ແກ່ ສປປ ລາວ

ການຊ່ວຍເຫຼືອຂອງທະນາຄານໂລກ (WB) ແລະ ອົງການການເງິນສາກົນ (IFC) ໄດ້ສະໜອງເປັນ:

- ✓ ການສະໜອງທຶນ / ການລົງທຶນ
- ✓ ການຊ່ວຍເຫຼືອດ້ານວິຊາການ / ການໃຫ້ຄຳປຶກສາ
- ✓ ການແລກປ່ຽນຄວາມຮູ້ ແລະ ຄວາມສາມາດ




## ການສະໜັບສະໜູນດ້ານການເງິນທີ່ດຳເນີນຢູ່ໃນປັດຈຸບັນ

- ການສະໜັບສະໜູນທຶນ = 450 ລ້ານໂດລາສະຫະລັດ (IDA + Trust Funds + IFC)
- 18 ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ + ການບໍລິການໃຫ້ຄຳປຶກສາ ແລະ ການສຶກສາ
- ທຶນ IDA 17 = 173 ລ້ານໂດລາສະຫະລັດ (ກໍລະກົດ 2014 - ມິຖຸນາ 2017)

LAO

# ການຊ່ວຍເຫຼືອຂອງກຸ່ມທະນາຄານໂລກ ແກ່ ສປປ ລາວ

## ການຊ່ວຍເຫຼືອໃນອະນາຄົດ:

- ຄາດຄະເນ ທຶນ IDA 18 = 240 - 270 ລ້ານ ໂດລາສະຫະລັດ (ກໍລະກົດ 2017 - ມິຖຸນາ 2020)
  - ທຶນ IDA 18 ເພີ່ມຂຶ້ນ 50% ທຽບໃສ່ ທຶນ IDA 17
- ເງື່ອນໄຂການສະໜອງທຶນ = ສິນເຊື່ອ ຂອງສະມາຄົມພັດທະນາສາກົນ (IDA Credits) (ຊຶ່ງເປັນເງິນກູ້ທີ່ມີເງື່ອນໄຂຜ່ອນຜັນ, ມີອັດຕາດອກເບ້ຍ ຢູ່ໃນລະດັບປະມານ 2%, ໄລຍະກູ້ຢືມ 30 ປີ ແລະ ໄລຍະປອດໜີ້ 5 ປີ)
- ການເພີ່ມຂຶ້ນຂອງການສະໜອງທຶນ ຈະສ້າງກາລະໂອກາດເພື່ອຂະຫຍາຍຜົນກະທົບໃຫ້ກວ້າງອອກໃນຂົງເຂດຕົ້ນຕໍຂອງ ການເຕີບໂຕສີຂຽວ ແລະ ວຽກງານໂພຊະນາການ (ຜ່ານແຜນງານສຳຄັນໃນດ້ານສາທາລະນະສຸກ, ການສຶກສາ, ກະສິກຳ ແລະ ການສະໜອງນ້ຳ ແລະ ສຸຂາອະນາໄມ ຢູ່ເຂດຊົນນະບົດ)

LAO

WORLD BANK GROUP

# ໂຄງປະກອບຂອງ CPF: ຂົງເຂດຈຸດສຸມ ແລະ ຈຸດປະສົງ

### ສະໜັບສະໜູນ ການເຕີບໂຕທີ່ສົມດູນ

- ປັບປຸງວຽກງານການເງິນຂອງລັດ ໃຫ້ກ້າວໄປສູ່ເສັ້ນທາງທີ່ໝັ້ນຄົງ ຍືນຍົງ ແລະ ສະໜັບສະໜູນ ສະຖຽນລະພາບຂອງຂະແໜງການເງິນ
- ສ້າງຄວາມສະດວກສະບາຍໃຫ້ແກ່ການດຳເນີນທຸລະກິດ
- ລົງທຶນໃສ່ພື້ນຖານໂຄງລ່າງເພື່ອການເຕີບໂຕ ແລະ ຄວາມສົມດູນ

### ລົງທຶນໃສ່ການພັດທະນາຄົນ

- ຫລຸດຜ່ອນການແຜ່ຫຼາຍຂອງການຂາດໂພຊະນາການ
- ປັບປຸງຄຸນນະພາບຂອງການສຶກສາຂັ້ນປະຖົມ ແລະ ອະນຸບານ ແລະ ສົ່ງເສີມເດັກຍິງໃຫ້ມາໂຮງຮຽນ
- ປັບປຸງຄຸນນະພາບ ແລະ ການເຂົ້າເຖິງການບໍລິການດ້ານສາທາລະນະສຸກ
- ຫລຸດຜ່ອນຄວາມບອບບາງ ແລະ ເພີ່ມການເຂົ້າເຖິງການບໍລິການດ້ານສັງຄົມ ຢ່າງທົ່ວເຖິງ

### ປົກປັກຮັກສາສິ່ງແວດລ້ອມ

- ສົ່ງເສີມການປົກປັກຮັກສາສິ່ງແວດ ລ້ອມ ແລະ ການຄຸ້ມຄອງຊັບພະຍາ ກອນທຳມະຊາດຢ່າງຍືນຍົງ
- ສ້າງຕັ້ງລະບົບການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ແລະ ສ້າງຄວາມເຂັ້ມແຂງທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ

**ບັນຫາທີ່ພົວພັນກັບຫຼາຍຂະແໜງການ:** ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ ເພື່ອສ້າງສະພາບແວດລ້ອມທີ່ອີງໃສ່ລະບຽບການ

LAO

WORLD BANK GROUP

# ຂົງເຂດຈຸດສຸມທີ 1:  ສະໜັບສະໜູນການເຕີບໂຕທີ່ສົມດູນ

## ຈຸດປະສົງ 1.1. ປັບປຸງວຽກງານການເງິນຂອງລັດ ໃຫ້ກ້າວໄປສູ່ເສັ້ນທາງທີ່ໝັ້ນຄົງຍືນຍົງ ແລະ ສະໜັບສະໜູນສະຖຽນລະພາບຂອງຂະແໜງການເງິນ

### ການສະໜັບສະໜູນ/ໂຄງການທີ່ດໍາເນີນຢູ່ໃນປັດຈຸບັນ:

ທະນາຄານໂລກ

- ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບສະຖິຕິແຫ່ງຊາດ
- ການຊ່ວຍເຫຼືອດ້ານວິຊາການ ສໍາລັບການພັດທະນາຂີດຄວາມສາມາດຂອງຂະແໜງເຂື່ອນໄຟຟ້າ ແລະ ບໍ່ແຮ່
- ຍຸດທະສາດການຫັນການຄຸ້ມຄອງວຽກງານການເງິນຂອງລັດໄປສູ່ທັນສະໄໝ
- ການພັດທະນາຂະແໜງການເງິນ
- ບົດລາຍງານເສດຖະກິດຂອງ ສປປ ລາວ

### ການສະໜັບສະໜູນ/ໂຄງການທີ່ເປັນໄປໄດ້ໃນອະນາຄົດ:

ທະນາຄານໂລກ

- ການສະໜັບສະໜູນງົບປະມານ ສໍາລັບການເຕີບໂຕສີຂຽວ
- ວຽກງານສະຖິຕິ ແລະ ການຂຶ້ນທະບຽນພົນລະເມືອງ ແລະ ສະຖິຕິການຄຸ້ມຄອງພົນລະເມືອງ
- ວຽກງານຄຸ້ມຄອງການເງິນຂອງລັດ

LAO

WORLD BANK GROUP

# ຂົງເຂດຈຸດສຸມທີ 1:  ສະໜັບສະໜູນການເຕີບໂຕທີ່ສົມດູນ

## ຈຸດປະສົງ 1.2.  ສ້າງຄວາມສະດວກສະບາຍໃຫ້ແກ່ການດຳເນີນທຸລະກິດ

### ການສະໜັບສະໜູນ/ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ:

**ທະນາຄານໂລກ**

- ໂຄງການເພື່ອອຳນວຍຄວາມສະດວກດ້ານການຄ້າ ແລະ ພາສີ
- ໂຄງການເພື່ອພັດທະນາການຄ້າ (TDF) ໄລຍະ 2
- ໂຄງການສົ່ງເສີມການເຂົ້າເຖິງແຫຼ່ງທຶນ ສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ  (SMEs)
- ການວິໄຈຄວາມທຸກຍາກ
- ການພັດທະນາຂະແໜງການເງິນ

**ການລົງທຶນຂອງ IFC**

- ເງິນກູ້ເປັນເງິນກີບໃຫ້ແກ່ ABL
- ລັດວິສາຫະກິດໄຟຟ້າລາວ (EDL)
- ເງິນກູ້ໃຫ່ແກ່ທະນາຄານ ລາວ-ຝຣັ່ງ ຈຳກັດ (BFL)
- KS Resort – Sofitel Luang Prabang
- Essilao

**ການບໍລິການໃຫ້ຄຳປຶກສາຂອງ IFC**

- ທຸລະກຳຄ້ຳປະກັນ -  ການພັດທະນາຕະຫຼາດການເງິນໂດຍນຳໃຊ້ຊັບສິນເຄື່ອນທີ່
- ການຫັນລະບົບການຊຳລະແຫ່ງຊາດໄປສູ່ທັນສະໄໝ
- ການພັດທະນາຫ້ອງການຂໍ້ມູນຂ່າວສານສິນເຊື່ອ
- ການປະຕິຮູບບັນຍາກາດການລົງທຶນ

### ການສະໜັບສະໜູນ/ໂຄງການທີ່ເປັນໄປໄດ້ໃນອະນາຄົດ:

**ທະນາຄານໂລກ**

- ການທຸລະກິດດ້ານການກະເສດ
- ການພັດທະນາຄວາມສາມາດແຂ່ງຂັນ ແລະ ພາກເອກະຊົນ

**ການລົງທຶນຂອງ IFC**

- ການລົງທຶນໃນທະນາຄານທຸລະກິດທີ່ຖືກຄັດເລືອກ

LAO

WORLD BANK GROUP

# ຂົງເຂດຈຸດສຸມທີ 1:  ສະໜັບສະໜູນການເຕີບໂຕທີ່ສົມດູນ

## ຈຸດປະສົງ 1.3.  ລົງທຶນໃສ່ພື້ນຖານໂຄງລ່າງ ເພື່ອຄວາມເຕີບໂຕ ແລະ ຄວາມສົມດູນ

**ການສະໜັບສະໜູນ/ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ:**

**ທະນາຄານໂລກ**
- ໂຄງການພັດທະນາຂະແໜງຂົວ-ທາງ ໄລຍະ 1
- ໂຄງການພັດທະນາຂະແໜງຂົວ-ທາງ ໄລຍະ 2
- ໂຄງການປັບປຸງຕາໜ່າງສາຍສົ່ງໄຟຟ້າ
- ກອງທຶນຫລຸດຜ່ອນຄວາມທຸກຍາກ ໄລຍະ 3
- ການວິໄຈຄວາມທຸກຍາກ
- ການສະໜອງນ້ຳ ແລະ ສຸຂາອະນາໄມ ຢູ່ເຂດຊົນນະບົດ ທີ່ແນໃສ່ຜູ້ທຸກຍາກ

**ການບໍລິການໃຫ້ຄຳປຶກສາຂອງ IFC**
- ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ (PPP) ໃນຂະແໜງຂົວ-ທາງ ຂອງ ສປປ ລາວ

**ການສະໜັບສະໜູນ/ໂຄງການທີ່ເປັນໄປໄດ້ໃນອະນາຄົດ:**

**ທະນາຄານໂລກ**
- ທາງຫຼວງແຫ່ງຊາດ ເລກ 13 - ເໜືອ
- ໂຄງການຊ່ວຍເຫຼືອດ້ານວິຊາການ ແກ່ການພັດທະນາພະລັງງານ ແລະ ບໍ່ແຮ່ແບບຍືນຍົງ
- ການເຊື່ອມຕໍ່ດ້ານພະລັງງານກັບຫວຽດນາມ
- ການພັດທະນາຊົນນະບົດ/ການຂະຫຍາຍຕາໜ່າງໄຟຟ້າ

**ການລົງທຶນຂອງ IFC**
- ການລົງທຶນໃນໂຄງການເຂື່ອນໄຟຟ້າ ທີ່ຖືກຄັດເລືອກ

LAO

WORLD BANK GROUP

# ຂົງເຂດຈຸດສຸມທີ 2: ລົງທຶນໃສ່ການພັດທະນາຄົນ

## ຈຸດປະສົງ 2.1. ຫລຸດຜ່ອນການແຜ່ຫຼາຍຂອງການຂາດໂພຊະນາການ

**ການສະໜັບສະໜູນ/ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ:**

ທະນາຄານໂລກ
- ການແກ້ໄຂຄວາມອ່ອນແອ ແລະ ການຂາດສານອາຫານ
- ໂຄງການພັດທະນາລະບົບຄຸ້ມຄອງບໍລິຫານສາທາລະນະສຸກ ແລະ ພັດທະນາໂພຊະນາການ
- ກອງທຶນຫລຸດຜ່ອນຄວາມທຸກຍາກ ໄລຍະ 3

**ການສະໜັບສະໜູນ/ໂຄງການທີ່ເປັນໄປໄດ້ໃນອະນາຄົດ:**

ທະນາຄານໂລກ
- ລະບົບປະກັນສັງຄົມເພື່ອຫລຸດຜ່ອນຄວາມອ່ອນແອ ແລະ ການຂາດສານອາຫານ
- ການສະໜອງທຶນເພີ່ມເຕີມ ແກ່ໂຄງການພັດທະນາລະບົບຄຸ້ມຄອງບໍລິຫານສາທາລະນະສຸກ ແລະ ພັດທະນາໂພຊະນາການ
- ການຄຸ້ມຄອງຮັກສາສຸຂະພາບເພື່ອທຸກຄົນ
- ການສະໜອງນ້ຳ ແລະ ສຸຂາອະນາໄມ ເພື່ອສຸຂະພາບ
- ການທຸລະກິດດ້ານການກະເສດ
- ການລົງທຶນພັດທະນາເດັກກ່ອນໄວຮຽນ (ການສຶກສາຂອງເດັກກ່ອນໄວຮຽນ/ການອ່ານໜັງສືໃນປີຕົ້ນຂອງຊັ້ນປະຖົມ)

## ຈຸດປະສົງ 2.2. ປັບປຸງຄຸນນະພາບຂອງການສຶກສາຂັ້ນປະຖົມ ແລະ ອະນຸບານ ແລະ ສົ່ງເສີມ ໃຫ້ເດັກຍິງມາໂຮງຮຽນ

**ການສະໜັບສະໜູນ/ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ:**

ທະນາຄານໂລກ
- ໂຄງການການສຶກສາຂອງເດັກກ່ອນໄວຮຽນ
- ກອງທຶນຮ່ວມສາກົນເພື່ອການສຶກສາ (GPE) ໄລຍະ 2

**ການສະໜັບສະໜູນ/ໂຄງການທີ່ເປັນໄປໄດ້ໃນອະນາຄົດ:**

ທະນາຄານໂລກ
- ການລົງທຶນພັດທະນາເດັກກ່ອນໄວຮຽນ (ການສຶກສາຂອງເດັກກ່ອນໄວຮຽນ/ການອ່ານໜັງສືໃນປີຕົ້ນຂອງຊັ້ນປະຖົມ)

LAO

WORLD BANK GROUP

# ຂົງເຂດຈຸດສຸມທີ 2: ລົງທຶນໃສ່ການພັດທະນາຄົນ

## ຈຸດປະສົງ 2.3. ປັບປຸງຄຸນນະພາບ ແລະ ການເຂົ້າເຖິງການບໍລິການດ້ານສາທາລະນະສຸກ

**ການສະໜັບສະໜູນ/ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ:**

ທະນາຄານໂລກ

- ການແກ້ໄຂຄວາມອ່ອນແອ ແລະ ການຂາດສານອາຫານ
- ການສະໜອງນ້ຳ ແລະ ສຸຂາອະນາໄມ ຢູ່ເຂດຊົນນະບົດ ທີ່ແນໃສ່ຜູ້ທຸກຍາກ
- ໂຄງການພັດທະນາລະບົບຄຸ້ມຄອງບໍລິຫານສາທາລະນະສຸກ ແລະ ພັດທະນາໂພຊະນາການ

**ການສະໜັບສະໜູນ/ໂຄງການທີ່ເປັນໄປໄດ້ໃນອະນາຄົດ:**

ທະນາຄານໂລກ

- ການສະໜອງທຶນເພີ່ມເຕີມ ແກ່ໂຄງການພັດທະນາລະບົບຄຸ້ມຄອງບໍລິຫານສາທາລະນະສຸກ ແລະ ພັດທະນາໂພຊະນາການ
- ການຄຸ້ມຄອງຮັກສາສຸຂະພາບເພື່ອທຸກຄົນ
- ວຽກງານສະຖິຕິ ແລະ ການຂຶ້ນທະບຽນພົນລະເມືອງ ແລະ ສະຖິຕິການຄຸ້ມຄອງພົນລະເມືອງ

## ຈຸດປະສົງ 2.4. ຫລຸດຜ່ອນຄວາມບອບບາງ ແລະ ເພີ່ມການເຂົ້າເຖິງການບໍລິການດ້ານສັງຄົມຢ່າງທົ່ວເຖິງ

**ການສະໜັບສະໜູນ/ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ:**

ທະນາຄານໂລກ

- ການແກ້ໄຂຄວາມອ່ອນແອ ແລະ ການຂາດສານອາຫານ

**ການສະໜັບສະໜູນ/ໂຄງການທີ່ເປັນໄປໄດ້ໃນອະນາຄົດ:**

ທະນາຄານໂລກ

- ລະບົບປະກັນສັງຄົມເພື່ອຫລຸດຜ່ອນຄວາມອ່ອນແອ ແລະ ການຂາດສານອາຫານ

# ຂົງເຂດຈຸດສຸມທີ 3: ປົກປັກຮັກສາສິ່ງແວດລ້ອມ

## ຈຸດປະສົງ 3.1. ສົ່ງເສີມການປົກປັກຮັກສາສິ່ງແວດລ້ອມ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດຢ່າງຍືນຍົງ

### ການສະໜັບສະໜູນ/ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ:

**ທະນາຄານໂລກ**
- ໂຄງການວິເຄາະການເຕີບໂຕສີຂຽວ
- ໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ ສປປ ລາວ ໄລຍະ 2
- ການຂະຫຍາຍການຄຸ້ມຄອງ-ຈັດສັນປ່າໄມ້ແບບຍືນນານ ແລະ ມີສ່ວນຮ່ວມ
- ການຊ່ວຍເຫຼືອດ້ານວິຊາການ ສຳລັບການພັດທະນາຂີດຄວາມສາມາດຂອງຂະແໜງເຂື່ອນໄຟຟ້າ ແລະ ບໍ່ແຮ່
- ການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ ສຳລັບແມ່ນ້ຳຂອງ
- ໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ ນ້ຳເທີນ 2

**ການບໍລິການໃຫ້ຄຳປຶກສາຂອງ IFC**
- ໂຄງການໃຫ້ຄຳປຶກສາດ້ານວຽກງານປ່າໄມ້ຢູ່ ສປປ ລາວ
- ການໃຫ້ຄຳປຶກສາດ້ານການຄຸ້ມຄອງນ້ຳຢູ່ ສປປ ລາວ

### ການສະໜັບສະໜູນ/ໂຄງການທີ່ເປັນໄປໄດ້ໃນອະນາຄົດ:

**ທະນາຄານໂລກ**
- ການຫລຸດຜ່ອນການປ່ອຍອາຍພິດເຮືອນແກ້ວ ຈາກການທຳລາຍປ່າໄມ້
- ການສະໜອງທຶນເພີ່ມເຕີມ ແກ່ການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ ສຳລັບແມ່ນ້ຳຂອງ
- ໂຄງການຄຸ້ມຄອງຊັບພະຍາກອນນ້ຳ
- ໂຄງການຊ່ວຍເຫຼືອດ້ານວິຊາການ ແກ່ການພັດທະນາພະລັງງານ ແລະ ບໍ່ແຮ່ແບບຍືນຍົງ

**ການລົງທຶນຂອງ IFC**
- ການປູກຕົ້ນໄມ້ ແລະ ການປຸງແຕ່ງໄມ້
- ໂຄງການພະລັງງານທົດແທນ (ພະລັງງານຈາກນ້ຳ, ແສງຕາເວັນ ຫຼື ລົມ)

LAO

WORLD BANK GROUP

# ຂົງເຂດຈຸດສຸມທີ 3: ປົກປັກຮັກສາສິ່ງແວດລ້ອມ

## ຈຸດປະສົງ 3.2. ສ້າງຕັ້ງລະບົບການຄຸ້ມຄອງຄວາມສ່ຽງຈາກໄພພິບັດໃຫ້ເຂັ້ມແຂງ ແລະ ສ້າງຄວາມເຂັ້ມແຂງທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ

**ການສະໜັບສະໜູນ/ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ:**

ທະນາຄານໂລກ

- ໂຄງການພັດທະນາຂະແໜງຂົວ-ທາງ ໄລຍະ 2

**ການສະໜັບສະໜູນ/ໂຄງການທີ່ເປັນໄປໄດ້ໃນອະນາຄົດ:**

ທະນາຄານໂລກ

- ໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດ

# ບັນຫາທີ່ພົວພັນກັບຫຼາຍຂະແໜງການ: ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ ເພື່ອສ້າງສະພາບແວດລ້ອມທີ່ອີງໃສ່ລະບຽບການ

**ການສະໜັບສະໜູນ/ໂຄງການທີ່ດຳເນີນຢູ່ໃນປັດຈຸບັນ:**

<u>ທະນາຄານໂລກ</u>

- ແຜນງານວິເຄາະການເຕີບໂຕສີຂຽວ
- ໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ ສປປ ລາວ ໄລຍະ 2
- ການຊ່ວຍເຫຼືອດ້ານວິຊາການ ສຳລັບການພັດທະນາຂີດຄວາມສາມາດຂອງຂະແໜງເຂື່ອນໄຟຟ້າ ແລະ ບໍ່ແຮ່
- ໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ ນໍ້າເທີນ 2

**ການສະໜັບສະໜູນ/ໂຄງການທີ່ເປັນໄປໄດ້ໃນອະນາຄົດ:**

<u>ທະນາຄານໂລກ</u>

- ການສະໜັບສະໜູນງົບປະມານ ສຳລັບການເຕີບໂຕສີຂຽວ

LAO

WORLD BANK GROUP

# ຄວາມສ່ຽງໃນການຈັດຕັ້ງປະຕິບັດ CPF

ລະດັບຄວາມສ່ຽງລວມ = ສູງສົມຄວນ

*ຄວາມສ່ຽງດ້ານການບໍລິຫານ-ຄຸ້ມຄອງ*

- ສປປ ລາວ ຖືກຈັດຢູ່ໃນອັນດັບຕ່ຳ ສຳລັບຕົວຊີ້ວັດດ້ານການບໍລິຫານ-ຄຸ້ມຄອງລັດຈຳນວນໜຶ່ງ (ການມີສຽງ ແລະ ຄວາມຮັບຜິດຊອບ, ການຄວບຄຸມການສໍ້ລາດບັງຫຼວງ, ຄຸນນະພາບຂອງລະບຽບການ)
- ສິ່ງທ້າທາຍຕົ້ນຕໍໃນດ້ານສະຖາບັນ: ການຫັນເປັນການຄ້າ, ການຂາດການປະສານງານໃນລັດຖະບານ, ຄວາມສາມາດດ້ານການບໍລິຫານຍັງອ່ອນນ້ອຍ, ການຄວບຄຸມ ແລະ ຄວາມສົມດູນຍັງຈຳກັດ

*ຄວາມສ່ຽງດ້ານເສດຖະກິດມະຫາພາກ*

- ຄວາມສ່ຽງສູງ ຈາກນະໂຍບາຍການຄຸ້ມຄອງເສດຖະກິດພາຍໃນ: ການຄຸ້ມຄອງໜີ້ສິນພາກລັດ, ການໃຊ້ຈ່າຍນອກແຜນງົບປະມານ, ມູນຄ່າໃຊ້ຈ່າຍເພີ່ມຂຶ້ນສູງເກີນຂອບເຂດ, ຄວາມອ່ອນແອຂອງຂະແໜງການເງິນ
- ຄວາມກົດດັນຂອງອັດຕາແລກປ່ຽນ ອາດສາມາດກະຕຸກໃຫ້ເກີດມີເງິນເຟີ້ແຮງ

*ຄວາມສ່ຽງດ້ານສິ່ງແວດລ້ອມ*

- ຊັບພະຍາກອນທຳມະຊາດຂອງ ສປປ ລາວ ໄດ້ຖືກຂຸດຄົ້ນຢ່າງຫຼວງຫຼາຍ (ການຫລຸດລົງຂອງການປົກຄຸມຂອງປ່າໄມ້, ການພັດທະນາເຂື່ອນໄຟຟ້າ)
- ບັນດາກິດຈະກຳທາງດ້ານເສດຖະກິດ ມີຄວາມບອບບາງ ແລະ ຄວາມສ່ຽງເພີ່ມຂຶ້ນ ຕໍ່ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຈາກທຳມະຊາດ

LAO

WORLD BANK GROUP

# 4. ໂຄງການໃໝ່ ສຳລັບ 2017-2018



# ໂຄງການໃໝ່ ສຳລັບ 2017-2018

| ປີ | ຂົງເຂດຈຸດສຸມ ຂອງ CPF | ຊື່ໂຄງການ | ມູນຄ່າ (ລ້ານ US$ ) | ໝາຍເຫດ |
|---|---|---|---|---|
| 2017 | ສ້າງຄວາມເຂັ້ມແຂງ ໃຫ້ແກ່ສະຖາບັນ | ການສະໜັບສະໜູນດ້ານງົບປະມານ ສໍາລັບການເຕີບໂຕສີຂຽວ | 38,6 | ສະພາບໍລິຫານ: 31 ພຶດສະພາ (IDA17) |
| | ສະໜັບສະໜູນການ ເຕີມໂຕທີ່ສົມດູນ | ການສະໜອງທຶນໃຫ້ທະນາຄານ ລາວ-ຝຣັ່ງ ຈຳກັດ (BFL) ເພື່ອສະໜັບສະໜູນວິສາຫະກິດ ຂະໜາດນ້ອຍ ແລະ ກາງ (SMEs) | 10 | ພຶດສະພາ (IFC) |
| | | ການສະໜອງທຶນໃຫ້ ທະນາຄານທຸລະກິດອື່ນໆ, ເປັນເງິນກີບ, ເພື່ອສະໜັບສະໜູນ ວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs) | 9 | ມິຖຸນາ (IFC) |
| | ລົງທຶນໃສ່ການ ພັດທະນາຄົນ | ການສະໜອງທຶນເພີ່ມ ສໍາລັບໂຄງການພັດທະນາລະບົບຄຸ້ມຄອງບໍລິຫານສາທາລະນະສຸກ ແລະ ພັດທະນາໂພຊະນາການ | 10 | ຊົ່ວຄາວ |
| | ປົກປັກຮັກສາ ສິ່ງແວດລ້ອມ | ໂຄງການການໃຫ້ຄໍາປຶກສາ ແກ່ວຽກງານປ່າໄມ້ ຢູ່ ສປປ ລາວ | 1,8 | ພຶດສະພາ (IFC) |
| | | ການສະໜອງທຶນເພີ່ມເຕີມ ແກ່ການຄຸ້ມຄອງຊັບພະຍາກອນນໍ້າແບບປະສົມປະສານ ສໍາລັບ ແມ່ນໍ້າຂອງ | 25 | ສະພາບໍລິຫານ: 6 ມິຖຸນາ |
| | | ການຄຸ້ມຄອງຄວາມສ່ຽງຈາກໄພພິບັດ | 30 | ສະພາບໍລິຫານ: 6 ມິຖຸນາ |
| | | ການສະໜອງທຶນເພື່ອແກ້ໄຂໄພພິບັດ | 10 | ຊົ່ວຄາວ |
| 2018 | ສະໜັບສະໜູນການ ເຕີບໂຕທີ່ສົມດູນ | ການທຸລະກິດດ້ານການກະເສດ | 35 | ຊົ່ວຄາວ |
| | | ວຽກງານສະຖິຕິ ແລະ ການຂຶ້ນທະບຽນພົນລະເມືອງ ແລະ ສະຖິຕິການຄຸ້ມຄອງພົນລະເມືອງ | 20 | ຊົ່ວຄາວ |
| | | ທາງຫຼວງແຫ່ງຊາດ ເລກ 13 ເໜືອ | 40 | ຊົ່ວຄາວ |
| | ລົງທຶນໃສ່ການ ພັດທະນາຄົນ | ການປະກັນສັງຄົມ ເພື່ອຫລຸດຜ່ອນຄວາມອ່ອນແອ ແລະ ການຂາດສານອາຫານ | 25 | ຊົ່ວຄາວ |

LAO

WORLD BANK GROUP



# 5. ໂຄງການໃໝ່ ຢູ່ພາກເໜືອຂອງ ສປປ ລາວ

LAO

WORLD BANK GROUP

# ໂຄງການພັດທະນາຂະແໜງຂົວ-ທາງ ຂອງ ສປປ ລາວ ໄລຍະ 2

| | |
|---|---|
| ວັນທີໄດ້ຮັບອະນຸມັດ: 13 ທັນວາ 2016 | ມູນຄ່າໂຄງການທັງໝົດ: **47,4 ລ້ານ ໂດລາສະຫະລັດ** |
| ວັນທີເລີ່ມປະຕິບັດໂຄງການ: 23 ມີນາ 2017 | *ລັດຖະບານ ສປປ ລາວ: 10 ລ້ານໂດລາສະຫະລັດ* |
| ວັນທີສິ້ນສຸດໂຄງການ: 31 ສິງຫາ 2022 | *IDA: 25 ລ້ານໂດລາສະຫະລັດ* |
| | *Nordic Development Fund: 12,4 ລ້ານໂດລາ ສະຫະລັດ* |

- **ຈຸດປະສົງການພັດທະນາໂຄງການ**: ເສີມຂະຫຍາຍລະບົບການບູລະນະຮັກສາ ເພື່ອປັບປຸງການເຊື່ອມຈອດຂອງເສັ້ນທາງ ໃຫ້ເປັນໜ້າເຊື່ອຖືໄດ້ ຢູ່ ສປປ ລາວ ແລະ ສະໜອງການຕອບໂຕ້ໂດຍດ່ວນ ແລະ ມີປະສິດທິຜົນ ໃນກໍລະນີເກີດມີວິກິດການ ຫຼື ເຫດສຸກເສີນ ທີ່ຄາດໄວ້.
- **ສະຖານທີ່ຕັ້ງ**: ແຂວງຊຽງຂວາງ, ໄຊຍະບູລີ, ຜົ້ງສາລີ, ອຸດົມໄຊ, ຫົວພັນ ແລະ ບໍລິຄຳໄຊ (ໝົດທຸກແຂວງດັ່ງກ່າວ ມີຄວາມສ່ຽງສູງຈາກໄພພິບັດຈາກທຳມະຊາດ).
- **ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ**: ປະຊາຊົນຈຳນວນ 1,6 ລ້ານຄົນ ຈະໄດ້ຮັບຜົນປະໂຫຍດຈາກການເຊື່ອມຈອດຂອງເສັ້ນທາງ ທີ່ໄດ້ຮັບການປັບປຸງ ແລະ ເຊື່ອຖືໄດ້
- **ກິດຈະກຳຂອງໂຄງການ**: (i) ປັບປຸງຕາໜ່າງເສັ້ນທາງ ໃຫ້ມີຄວາມທົນທານຕໍ່ສະພາບດິນຟ້າອາກາດ ດ້ວຍການປັບປຸງຕອນທາງທີ່ອ່ອນແອ ຂອງຕາໜ່າງເສັ້ນທາງລະດັບທ້ອງຖິ່ນ ແລະ ຈັດຕັ້ງປະຕິບັດວຽກງານບູລະນະຮັກສາໃຫ້ມີປະສິດທິພາບ; (ii) ປັບປຸງການວາງແຜນພັດທະນາເສັ້ນທາງ ແລະ ບົດແນະນຳທາງດ້ານເຕັກນິກ ໂດຍຄຳນຶງເຖິງຄວາມທົນທານຕໍ່ສະພາບດິນຟ້າອາກາດ, ແລະ (iii) ສ້າງຂີດຄວາມສາມາດໃຫ້ແກ່ພະນັກງານ ຂອງຂະແໜງໂຍທາທິການ ແລະ ຂົນສົ່ງ, ທັງຢູ່ຂັ້ນກະຊວງ, ຢູ່ຂັ້ນແຂວງ ແລະ ຂັ້ນເມືອງ.

# ໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດ

| | |
|---|---|
| ວັນທີໄດ້ຮັບອະນຸມັດ: 6 ກໍລະກົດ 2017 | ມູນຄ່າໂຄງການທັງໝົດ: **31 ລ້ານໂດລາ ສະຫະລັດ** |
| ວັນທີເລີ່ມປະຕິບັດໂຄງການ: ທ້າຍປີ 2017 (TBC) | *IDA: 30 ລ້ານໂດລາສະຫະລັດ* |
| ວັນທີສິ້ນສຸດໂຄງການ: 30 ມິຖຸນາ 2022 | ທຶນຄໍ້າປະກັນຄວາມສ່ຽງຈາກໄພພິບັດຂອງ*SEA: 1 ລ້ານໂດລາສະຫະລັດ* |

- **ຈຸດປະສົງການພັດທະນາໂຄງການ:** ຫລຸດຜ່ອນຜົນກະທົບຂອງໄພນໍ້າຖ້ວມ ຢູ່ເມືອງໄຊ ແລະ ເສີມຂະຫຍາຍຄວາມສາມາດຂອງລັດຖະບານ ໃນການສະໜອງການບໍລິການດ້ານອຸທົກກະສາດ ແລະ ອຸຕຸນິຍົມ ແລະ ໃນການຕອບໂຕ້ໄພພິບັດ.
- **ສະຖານທີ່ຕັ້ງ:** ແຂວງຜົ້ງສາລີ, ອຸດົມໃຊ, ຫຼວງພະບາງ (ໝົດທຸກແຂວງດັ່ງກ່າວ ມີຄວາມສ່ຽງສູງຈາກໄພພິບັດຈາກທຳມະຊາດ).
- **ຜູ້ໄດ້ຮັບຜົນປະໂຫຍດໂດຍກົງຈາກໂຄງການ:** ຊຸມຊົນຢູ່ເຂດຕົວເມືອງຂອງເມືອງໄຊ (98.000 ຄົນ) ແລະ ຜູ້ຊົມໃຊ້ສຸດທ້າຍ ຂອງຂໍ້ມູນຂ່າວສານດ້ານອຸທົກກະສາດ-ອຸຕຸນິຍົມ ແລະ ດິນຟ້າອາກາດ ທີ່ໄດ້ຖືກປັບປຸງດີຂຶ້ນ (ປະຊາຊົນຢູ່ເຂດອ່າງນໍ້າອູ, ລວມມີ ແຂວງອຸດົມໃຊ, ຫຼວງພະບາງ ແລະ ຜົ້ງສາລີ).
- **ກິດຈະກຳຂອງໂຄງການ:** ການຄຸ້ມຄອງຄວາມສ່ຽງຈາກໄພນໍ້າຖ້ວມຕົວເມືອງແບບປະສົມປະສານ ຢູ່ເມືອງໄຊ, ການຫັນວຽກງານອຸທົກກະສາດ ແລະ ອຸຕຸນິຍົມໄປສູ່ທັນສະໄໝ ແລະ ລະບົບເຕືອນໄພລ່ວງໜ້າ ຢູ່ຂັ້ນສູນກາງ, ແລະ ການວາງແຜນດ້ານການເງິນ ສຳລັບການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ຫຼັງໄພພິບັດ.

LAO

WORLD BANK GROUP

# ຂອບໃຈ !

ເອກະສານທັງໝົດ ໄດ້ມີ ແລະ ສາມາດດາວໂຫຼດໄດ້
ທີ່: www.worldbank.org/laos

ກະລຸນາສົ່ງ ຂໍ້ແນະນຳ ຫຼື ຄຳຄິດເຫັນຂອງທ່ານ
ເຖິງ: laos@worldbank.org ຫຼື
www.facebook.com/worldbanklaos



LAO

WORLD BANK GROUP